Country: Laos
Department of Finance
Ministry of Education

ພະແນກວິໄປະຫາງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ

ເລກທີ 19 /ສສ.ຈຕ 09

ນະຄອນຫຼວງວຽງຈັນ, ວັນທີ 12 JAN 2009 /2009

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍປະເພດຕໍາແໜ່ງບໍລິຫານຂອງຂະແໜງການສຶກສາ

--------000-------

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ ສະບັບເລກທີ 04/ສພຊ ລົງວັນທີ 3 ກໍລະກົດ 2007;
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ສະບັບເລກທີ 62/ນຍ ລົງວັນທີ 7 ເມສາ 2008;
- ອີງຕາມ ດໍາລັດນາຍົກລັດຖະມົນຕີ ວ່າດ້ວຍຕໍາແໜ່ງບໍລິຫານຂອງລັດຖະກອນແຫ່ງ ສ.ປ.ປ.ລາວ ສະບັບເລກທີ 99/ນຍ ລົງວັນທີ 23/06/2008;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຈັດຕັ້ງແລະພະນັກງານ.

## ລັດຖະມົນຕີວ່າການກະຊວງສຶກສາທິການ

## ຕົກລົງ:

ມາດຕາ 1: ກໍານົດປະເພດຕໍາແໜ່ງບໍລິຫານຂອງຂະແໜງການສຶກສາ ດັ່ງນີ້:

ຕໍາແໜ່ງບໍລິຫານປະເພດ I :

1. ຜູ້ຊ່ວຍລັດຖະມົນຕີ

ຕໍາແໜ່ງບໍລິຫານປະເພດ II :

1. ຫົວໜ້າຫ້ອງການກະຊວງ,ຫົວໜ້າກົມ ແລະ ທຽບເທົ່າ,
2. ຜູ້ອໍານວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
3. ຮອງອະທິການບໍດີ,ຄະນະບໍດີ ມະຫາວິທະຍາໄລ

ຕຳແໜ່ງບໍລິຫານປະເພດ III:

1. ຮອງຫົວໜ້າຫ້ອງການກະຊວງ, ຮອງຫົວໜ້າກົມ, ແລະ ທຽບເທົ່າ
2. ຮອງຜູ້ອຳນວຍການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
3. ຫົວໜ້າຫ້ອງການສຶກສາສິງສູນກາງ
4. ຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ
5. ຫົວໜ້າພະແນກສຶກສາປະຈຳແຂວງ
6. ຜູ້ອຳນວຍການວິທະຍາໄລຄູ, ວິທະຍາໄລເຕັກນິກສັບພະວິຊາ ແລະ ວິທະຍາໄລສົງ
7. ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນສູງ
8. ຜູ້ອຳນວຍການສູນສະຖິຕິ-ເຕັກໂນໂລຊີຂ່າວສານ ການສຶກສາ, ສູນຮັບປະກັນຄຸນນະພາບການສຶກສາ, ສູນການສຶກສາແມ່ຍິງ,ຊົນເຜົ່າແລະຜູ້ພິການ, ສູນພັດທະນາອາຊີວະສຶກສາ, ສູນປະກອບການລາວ -ອິນເດຍ, ສູນພັດທະນາການສຶກສານອກໂຮງຮຽນ (ຫຼັກ8) ແລະ ສູນຕ່າງໆຂອງສະຖາບັນຄົ້ນຄວ້າວິທະຍາ ສາດການສຶກສາ
9. ຮອງຄະນະບໍດີ
10. ຫົວໜ້າຫ້ອງການ, ຫົວໜ້າພາກວິຊາ, ຜູ້ອຳນວຍການຫໍສະໝຸດກາງ, ຜູ້ອຳນວຍການສູນໃນມະຫາວິທະຍາໄລ.

ຕຳແໜ່ງບໍລິຫານປະເພດ IV:

1. ຫົວໜ້າພະແນກສັງກັດຫ້ອງການກະຊວງ,ກົມແລະທຽບເທົ່າ
2. ຮອງຫົວໜ້າຫ້ອງການສຶກສາສົງສູນກາງ
3. ຮອງຫົວໜ້າຫ້ອງການສະພາທີ່ປຶກສາອາຊີວະສຶກສາ
4. ຮອງຜູ້ອຳນວຍການວິທະຍາໄລຄູ, ວິທະຍາໄລເຕັກນິກສັບພະວິຊາສາ, ວິທະຍາໄລສົງ
5. ຮອງຫົວໜ້າພະແນກສຶກສາປະຈຳແຂວງ
6. ຮອງຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນສູງ
7. ຮອງຜູ້ອຳນວຍການສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ, ສູນຮັບປະກັນຄຸນນະພາບການສຶກ ສາ, ສູນການສຶກສາແມ່ຍິງ, ຊົນເຜົ່າແລະຜູ້ພິການ, ສູນພັດທະນາອາຊີວະສຶກສາ, ສູນປະກອບການລາວ-ອິນເດຍ, ສູນພັດທະນາການສຶກສານອກໂຮງຮຽນ(ຫຼັກ8) ແລະສູນຕ່າງໆ ຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.
8. ຜູ້ອຳນວຍການສູນຜູ້ບໍລິຫານການສຶກສາຂອງກົມຈັດຕັ້ງແລະວິທະຍາໄລຄູ, ຜູ້ອຳນວຍການສູນການສຶກສາ ນອກໂຮງຮຽນພາກເໜືອ ແລະ ພາກໃຕ້, ຜູ້ອຳນວຍການສູນທີ່ຂຶ້ນກັບກົມ.
9. ຫົວໜ້າພະແນກທີ່ສັງກັດມະຫາວິທະຍາໄລ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
10. ຮອງຫົວໜ້າພາກວິຊາ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າຫໍສະໝຸດກາງ, ຮອງຫົວໜ້າສູນໃນມະຫາວິທະຍາໄລ.
11. ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນກາງ, ໂຮງຮຽນສ້າງຄູດົງຄຳຊ້າງ, ສາລະວັນ, ຫຼວງນ້ຳທາ, ສ້າງຄູສິລະປະແລະພະລະສຶກສາ,ໂຮງຮຽນເຕັກນິກປາກປາສັກ,ລາວ-ເຢຍລະມັນ,ໂຮງຮຽນເຕັກນິກ-ວິຊາຊີບວຽງຈັນ-ຮ່າໂນ້ຍ, ແຂວງວຽງຈັນ, ສະຫວັນນະເຂດ,ຫຼວງພະບາງ, ບໍ່ແກ້ວ,ຈຳປາສັກ,ໂຮງຮຽນເຕັກນິກກະສິກຳດົງ ຄຳຊ້າງ.

12. ຜູ້ອຳນວຍການໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ,ໂຮງຮຽນສາມັນກິນນອນຊົນເຜົ່າທີ່ຂຶ້ນກັບກະຊວງ,ໂຮງຮຽນສາມັນຊົນເຜົ່າຕອນປາຍແລະສົມບູນຂອງແຂວງ,ໂຮງຮຽນມັດທະຍົມຕອນປາຍ ແລະ ສົມບູນສິງ, ໂຮງຮຽນພອນສະຫວັນແລະຊົນເຜົ່າກຽມມະຫາວິທະຍາໄລ.
13. ຫົວໜ້າຫ້ອງການສຶກສາປະຈຳເມືອງ
14. ຫົວໜ້າຄະນະກວດກາການສຶກສາຂັ້ນແຂວງ

ຕຳແໜ່ງບໍລິຫານປະເພດ V:

1. ຮອງຫົວໜ້າພະແນກສັງກັດຫ້ອງການກະຊວງ,ກົມແລະທຽບເທົ່າ
2. ຫົວໜ້າຂະແໜງຂອງພະແນກສຶກສາແຂວງ
3. ຮອງຫົວໜ້າຫ້ອງການສຶກສາເມືອງ
4. ຫົວໜ້າຫ້ອງການສຶກສາສິງຂັ້ນແຂວງ
5. ຮອງຫົວໜ້າພະແນກສັງກັດມະຫາວິທະຍາໄລ/ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
6. ຮອງຜູ້ອຳນວຍການສູນ ຜູ້ບໍລິຫານການສຶກສາຂອງກົມຈັດຕັ້ງ ແລະ ວິທະຍາໄລຄູ, ຮອງຜູ້ອຳນວຍການສູນການສຶກສານອກໂຮງຮຽນພາກເໜືອ ແລະໃຕ້
7. ຫົວໜ້າຂະແໜງຂອງສູນສະຖິຕິ-ເຕັກໂນໂລຊີຂ່າວ ສານການສຶກສາ, ສູນຮັບປະກັນຄຸນນະພາບການສຶກສາ, ສູນການສຶກ ສາແມ່ຍິງ, ຊົນເຜົ່າແລະຜູ້ພິການ, ສູນພັດທະນາອາຊີວະສຶກສາ, ສູນປະກອບການລາວ-ອິນເດຍ, ສູນພັດທະນາການສຶກສານອກໂຮງຮຽນ(ຫຼັກ8) ແລະ ສູນຕ່າງໆຂອງສະຖາບັນ ຄົ້ນຄວ້າ ວິທະຍາສາດການສຶກສາ
8. ຮອງຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນກາງ:ໂຮງຮຽນສ້າງຄູດົງຄຳຊ້າງ, ສາລະວັນ, ຫຼວງນ້ຳທາ, ຄູສິລະປະແລະ ພະລະສຶກສາ,ໂຮງຮຽນເຕັກນິກປາກປາສັກ/ລາວ-ເຍຍລະມັນ, ໂຮງຮຽນເຕັກນິກ - ວິຊາຊີບວຽງຈັນ-ຮ່າໂນ້ຍ, ແຂວງວຽງຈັນ,ສະຫວັນນະເຂດ, ຫຼວງພະບາງ,ບໍ່ແກ້ວ,ຈຳປາສັກໂຮງຮຽນເຕັກນິກກະສິກຳດົງຄຳຊ້າງ.
9. ຮອງຜູ້ອຳນວຍການໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ,ໂຮງຮຽນສາມັນກິນນອນຊົນເຜົ່າທີ່ຂຶ້ນກະຊວງ, ໂຮງຮຽນສາມັນຊົນເຜົ່າຕອນປາຍແລະສົມບູນຂອງແຂວງ, ໂຮງຮຽນມັດທະຍົມຕອນປາຍແລະ ສົມບູນສິງ, ໂຮງຮຽນພອນສະຫວັນແລະຊົນເຜົ່າກຽມມະຫາວິທະຍາໄລ.
10. ຜູ້ອຳນວຍການໂຮງຮຽນມັດທະຍົມຕອນຕົ້ນ
11. ຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນຕົ້ນ, ໂຮງຮຽນວິຊາຊີບ/ວິຊາຊີບແບບປະສົມຂອງແຂວງ
12. ຫົວໜ້າຫ້ອງການ/ຂະແໜງຕ່າງໆຂອງວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ
13. ຄະນະກວດກາການສຶກສາຂັ້ນແຂວງ
14. ຫົວໜ້າສູນສຶກສານິເທດມັດທະຍົມ, ສູນບຳລຸງຄູ ແລະ ໂຮງຮຽນບຳລຸງວັດທະນະທຳຂອງແຂວງ
15. ຫົວໜ້າຂະແໜງໃນມະຫາວິທະຍາໄລ/ສະຖາບັນ

ຕຳແໜ່ງບໍລິຫານປະເພດ VI:

1. ຫົວໜ້າຂະແໜງທີ່ຂຶ້ນກັບພະແນກສັງກັດກົມ, ຫ້ອງການຢູ່ບັນດາກະຊວງ, ທຽບເທົ່າກະຊວງ
2. ຮອງຫົວໜ້າຫ້ອງການສຶກສາສິງຂັ້ນແຂວງ
3. ຮອງຫົວໜ້າຂະແໜງຂອງພະແນກສຶກສາແຂວງ

4. ຫົວໜ້າໜ່ວຍງານຂອງຫ້ອງການສຶກສາເມືອງ
5. ຮອງຫົວໜ້າຂະແໜງຂອງສູນ ສະຖິຕິ-ເຕັກໂນໂລຊີຂ່າວ ສານການສຶກສ, ສູນຮັບປະກັນຄຸນນະພາບການສຶກສາ, ສູນການສຶກສາແມ່ຍິງ, ຊົນເຜົ່າແລະຜູ້ພິການ, ສູນພັດທະນາອາຊີວະສຶກສາ, ສູນປະກອບການ ລາວ-ອິນເດຍ, ສູນພັດທະນາການສຶກສານອກໂຮງຮຽນ (ຫຼັກ8) ແລະ ສູນຕ່າງໆຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.
6. ຮອງຫົວໜ້າຫ້ອງການ/ຂະແໜງຕ່າງໆຂອງວິທະຍາໄລແລະໂຮງຮຽນວິຊາຊີບຊັ້ນສູງ
7. ຮອງຜູ້ອຳນວຍການໂຮງຮຽນວິຊາຊີບຊັ້ນຕົ້ນ
8. ຮອງຜູ້ອຳນວຍການໂຮງຮຽນມັດທະຍົມຕອນຕົ້ນ
9. ຜູ້ອຳນວຍການໂຮງຮຽນປະຖົມສົມບູນ,ໂຮງລ້ຽງເດັກ,ໂຮງຮຽນອະນຸບານ
10. ຫົວໜ້າໜ່ວຍງານຂອງໂຮງຮຽນມັດທະຍົມຕອນປາຍແລະມັດທະຍົມສົມບູນ,ໂຮງຮຽນສາມັນກິນນອນຊົນເຜົ່າທີ່ຂຶ້ນກະຊວງ,ໂຮງຮຽນສາມັນຊົນເຜົ່າຕອນປາຍ ແລະສົມບູນຂອງແຂວງ, ໂຮງຮຽນມັດທະຍົມຕອນປາຍ ແລະ ສົມບູນສິງ, ໂຮງຮຽນພອນສະຫວັນ ແລະຊົນເຜົ່າກຽມມະຫາວິທະຍາໄລ
11. ຫົວໜ້າໜ່ວຍງານ/ຫ້ອງການຕ່າງໆຂອງໂຮງຮຽນວິຊາຊີບຊັ້ນກາງແລະໂຮງຮຽນສ້າງຄູ
12. ຮອງຫົວໜ້າສູນສຶກສານິເທດມັດທະຍົມ, ສູນບຳລຸງຄູ ແລະ ໂຮງຮຽນບຳລຸງວັດທະນະທຳ ຂອງແຂວງ
13. ຄູສຶກສານິເທດ
14. ຮອງຫົວໜ້າຂະແໜງໃນມະຫາວິທະຍາໄລ/ສະຖາບັນ

ຕຳແໜ່ງບໍລິຫານປະເພດ VII :

1. ຮອງຫົວໜ້າຂະແໜງທີ່ຂຶ້ນກັບພະແນກສັງກັດກົມ, ຫ້ອງການ, ກົມແລະທຽບເທົ່າ ຢູ່ບັນດາກະຊວງ
2. ຫົວໜ້າໜ່ວຍງານຂອງຂະແໜງໃນພະແນກສຶກສາແຂວງ
3. ຮອງຫົວໜ້າໜ່ວຍງານຂອງຫ້ອງການສຶກສາເມືອງ
4. ຫົວໜ້າໜ່ວຍງານສັງກັດຂະແໜງ/ຫ້ອງການຂອງວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ
5. ຮອງຫົວໜ້າໜ່ວຍງານຕ່າງໆຂອງໂຮງຮຽນວິຊາຊີບຊັ້ນກາງ
6. ຫົວໜ້າຈຸງານຕ່າງໆຂອງໂຮງຮຽນວິຊາຊີບຊັ້ນຕົ້ນ
7. ຫົວໜ້າຈຸງານຂອງໂຮງຮຽນມັດທະຍົມຕອນຕົ້ນ
8. ຮອງຜູ້ອຳນວຍການໂຮງຮຽນປະຖົມສົມບູນ,ໂຮງລ້ຽງເດັກ,ໂຮງຮຽນອະນຸບານ
9. ຮອງຫົວໜ້າໜ່ວຍງານຂອງໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ
10. ຮອງຫົວໜ້າຫ້ອງການຕ່າງໆໂຮງຮຽນສ້າງຄູ
11. ຫົວໜ້າໂຮງຮຽນມູນລະປະຖົມສຶກສາ

ຕຳແໜ່ງບໍລິຫານປະເພດ VIII :

1. ຫົວໜ້າໜ່ວຍງານຂອງພະແນກທີ່ຂຶ້ນກັບກົມ
2. ຮອງຫົວໜ້າໜ່ວຍງານຂອງຂະແໜງໃນພະແນກສຶກສາ ແຂວງ
3. ຮອງຫົວໜ້າໜ່ວຍງານສັງກັດຂະແໜງ/ຫ້ອງການຂອງວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນສູງ
4. ຮອງຫົວໜ້າຈຸງານຂອງໂຮງຮຽນວິຊາຊີບຊັ້ນຕົ້ນ
5. ຮອງຫົວໜ້າຈຸງານຂອງໂຮງຮຽນມັດທະຍົມຕອນຕົ້ນ

6. ຫົວໜ້າຈຸງານຂອງໂຮງຮຽນປະຖົມສົມບູນ,ໂຮງລ້ຽງເດັກ,ອະນຸບານ

7. ຫົວໜ້າຈຸງານສັງກັດໜ່ວຍງານຂອງໂຮງຮຽນທີ່ຂຶ້ນກັບໂຮງຮຽນວິຊາຊີບຊັ້ນກາງ

8. ຫົວໜ້າຈຸງານຂອງໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ

9. ຫົວໜ້າຈຸງານສັງກັດໜ່ວຍງານຂອງຫ້ອງການສຶກສາເມືອງ

ມາດຕາ 2: ກຳນົດປະເພດຕຳແໜ່ງວິຊາການ ທີ່ທຽບເທົ່າຕຳແໜ່ງບໍລິຫານ ດັ່ງນີ້:

| | |
|---|---|
| 1. ສາດສະດາຈານ | ທຽບເທົ່າຕຳແໜ່ງບໍລິຫານປະເພດ I |
| 2. ຮອງສາດສະດາຈານ | ທຽບເທົ່າຕຳແໜ່ງບໍລິຫານປະເພດ II |
| 3. ອາຈານ | ທຽບເທົ່າຕຳແໜ່ງບໍລິຫານປະເພດ III |
| 4. ຜູ້ຊ່ວຍອາຈານ | ທຽບເທົ່າຕຳແໜ່ງບໍລິຫານປະເພດ IV |

ມາດຕາ 3: ລະບົບຕຳແໜ່ງບໍລິຫານຕາມລະບົບການຈັດຕັ້ງບໍລິຫານ ແລະວິຊາການຂອງຂະແໜງການສຶກສາໃນປະຈຸບັນປະກອບມີດັ່ງນີ້:

- ບັນດາຕຳແໜ່ງບໍລິຫານ ທີ່ຂຶ້ນກັບຫ້ອງການກະຊວງ, ກົມ ແລະ ທຽບເທົ່າ ປະກອບມີ ພະແນກ, ຂະແໜງ ແລະ ໜ່ວຍງານ.
- ບັນດາຕຳແໜ່ງບໍລິຫານ ທີ່ຂຶ້ນກັບພະແນກສຶກສາແຂວງ, ວິທະຍາໄລ, ໂຮງຮຽນວິຊາຊີບຊັ້ນສູງ ແລະ ສູນຕ່າງໆທີ່ຂຶ້ນກັບກະຊວງ ປະກອບມີຫ້ອງການ/ຂະແໜງ ແລະ ໜ່ວຍງານ.
- ບັນດາຕຳແໜ່ງບໍລິຫານທີ່ຂຶ້ນກັບຫ້ອງການສຶກສາເມືອງ ໂຮງຮຽນວິຊາຊີບຊັ້ນກາງ, ທຽບເທົ່າຊັ້ນກາງ, ໂຮງຮຽນມັດທະຍົມຕອນປາຍ, ສົມບູນ, ແລະ ສູນຕ່າງໆທີ່ຂຶ້ນກັບຫ້ອງການກະຊວງ, ກົມ ແລະ ທຽບເທົ່າ ປະກອບມີ ໜ່ວຍງານ ແລະ ຈຸງານ.
- ບັນດາຕຳແໜ່ງບໍລິຫານທີ່ຂຶ້ນກັບໂຮງຮຽນວິຊາຊີບຊັ້ນຕົ້ນ, ມັດທະຍົມຕອນຕົ້ນ,ໂຮງຮຽນປະຖົມສົມບູນ, ໂຮງລ້ຽງເດັກ-ອະນຸບານ ປະກອບມີ ຈຸງານ.
- ບັນດາຕຳແໜ່ງບໍລິຫານທີ່ຂຶ້ນກັບມະຫາວິທະຍາໄລປະກອບມີຄະນະວິຊາ, ພາກວິຊາ, ພະແນກວິຊາ, ຫ້ອງການ, ຂະແໜງ ແລະ ໜ່ວຍງານ.

ມາດຕາ 4:ໂຄງປະກອບການຈັດຕັ້ງຊົ່ວຄາວຂອງໂຮງຮຽນສາມັນສຶກສາ ໃຫ້ປະຕິບັດດັ່ງນີ້:

4.1.ໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ

1. ໜ່ວຍງານບໍລິຫານ:
    1. ຈຸງານບໍລິຫານ-ການເງິນ
    2. ຈຸງານຈັດຕັ້ງ-ອົງການຈັດຕັ້ງມະຫາຊົນ
2. ໜ່ວຍງານວິຊາການ:
    1. ຈຸງານວັນນະຄະດີ-ພາສາສາດ
    2. ຈຸງານເລກ-ວັດຖຸ
    3. ຈຸງານເຄມີ-ຊີວະ
    4. ຈຸງານພູມສາດ-ປະຫວັດສາດ
3. ໜ່ວຍງານເຕັກໂນໂລຊີຂໍ້ມູນຂ່າວສານ:
    1. ຈຸງານຫ້ອງທົດລອງ-ຫ້ອງສະໝຸດ
    2. ຈຸງານເຕັກໂນ-ຄອມພິວເຕີ້
4. ໜ່ວຍງານກິດຈະການນັກຮຽນ:

1. ຈຸງານປ້ອງກັນ

2. ຈຸງານທະບຽນນັກຮຽນ

3. ຈຸງານຫໍພັກ-ສະຫວັດດີການ

4. ຈຸງານສະໂມສອນ

4.2. ໂຮງຮຽນມັດທະຍົມຕອນຕົ້ນ:

1. ຈຸງານບໍລິຫານ

2. ຈຸງານວິຊາການ

3. ຈຸງານກິດຈະການນັກຮຽນ

4.3. ໂຮງຮຽນປະຖົມສົມບູນ,ໂຮງລ້ຽງເດັກ-ອະນຸບານ ( ທີ່ມີຄູ ແລະ ພະນັກງານຫຼາຍກວ່າສິບຄົນ )

1. ຈຸງານບໍລິຫານ

2. ຈຸງານວິຊາການ

ມາດຕາ5: ຢູ່ໃນຫ້ອງການ ແລະ ກົມ ຖ້າບໍ່ຈຳເປັນ ຫຼື ບໍ່ມີຫຼາຍຕຳແໜ່ງງານ ບໍ່ອະນຸຍາດໃຫ້ຈັດຕັ້ງໜ່ວຍງານ ຫຼື ຂະແໜງ; ຢູ່ພະແນກສຶກສາແຂວງ ຖ້າບໍ່ຈຳເປັນ ຫຼື ບໍ່ມີຫຼາຍຕຳແໜ່ງງານບໍ່ອະນຸຍາດໃຫ້ຈັດຕັ້ງ ໜ່ວຍງານ; ຢູ່ຫ້ອງການສຶກສາເມືອງ ຖ້າບໍ່ຈຳເປັນ ຫຼື ບໍ່ມີຫຼາຍຕຳແໜ່ງງານ ບໍ່ອະນຸຍາດໃຫ້ຈັດຕັ້ງຈຸງານ; ຢູ່ໂຮງຮຽນ, ວິທະຍາໄລ ແລະ ມະຫາວິທະຍາໄລ ຖ້າບໍ່ຈຳເປັນ ຫຼື ບໍ່ມີຫຼາຍຕຳແໜ່ງງານ ບໍ່ອະນຍາດ ໃຫ້ຈັດຕັ້ງໜ່ວຍງານ ຫຼື ຈຸງານ.

ມາດຕາ 6: ຜູ້ທີ່ກຳລັງດຳລົງຕຳແໜ່ງບໍລິຫານປະເພດຕ່າງໆໃນປະຈຸບັນ ແລະ ຜູ້ທີ່ຈະຖືກແຕ່ງຕັ້ງໃໝ່ ໃຫ້ຈັດເຂົ້າປະເພດຕຳແໜ່ງບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 1 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 7: ການແຕ່ງຕັ້ງຜູ້ດຳລົງຕຳແໜ່ງບໍລິຫານປະເພດຕ່າງໆໃຫ້ປະຕິບັດດັ່ງນີ້:

ຫົວໜ້າພະແນກສຶກສາປະຈຳແຂວງ ແຕ່ງຕັ້ງຮອງຫົວໜ້າຂະແໜງ, ຮອງຫົວໜ້າຫ້ອງການສຶກສາປະຈຳເມືອງ, ຫົວໜ້າໜ່ວຍງານໃນຫ້ອງການສຶກສາປະຈຳເມືອງ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ, ຫົວໜ້າ ແລະຮອງຫົວໜ້າໜ່ວຍງານ ແລະ ຫົວໜ້າຈຸງານຂອງ ໂຮງຮຽນມັດທະຍົມຕອນປາຍ ແລະ ມັດທະຍົມສົມບູນ,ໂຮງຮຽນວິຊາຊີບຊັ້ນຕົ້ນ, ສູນບຳລຸງຄູ,ໂຮງຮຽນບຳລຸງວັດທະນະທຳຂອງແຂວງ, ຄູສຶກສານິເທດໂດຍປະສານສົມທົບກັບຄະນະຈັດຕັ້ງແຂວງ.

ຫົວໜ້າຫ້ອງການສຶກສາປະຈຳເມືອງ ແຕ່ງຕັ້ງຮອງຫົວໜ້າໜ່ວຍງານຂອງການສຶກສາປະຈຳເມືອງ, ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ, ຫົວໜ້າຈຸງານຂອງໂຮງຮຽນມັດທະຍົມຕອນຕົ້ນ, ໂຮງຮຽນປະສົມບູນ, ຫົວໜ້າໂຮງຮຽນມູນລະປະຖົມສຶກສາ, ຫົວໜ້າ ແລະ ຮອງສູນການສຶກສາຊຸມຊົນໂດຍປະສານສົມທົບກັບຄະນະຈັດຕັ້ງເມືອງ.

ຫົວໜ້າກົມຕ່າງໆແຕ່ງຕັ້ງຫົວໜ້າແລະຮອງຫົວໜ້າຫ້ອງການ/ຂະແໜງ, ໜ່ວຍງານແລະຈຸງານຂອງວິທະຍາໄລ, ໂຮງຮຽນວິຊາຊີບຊັ້ນສູງ, ຊັ້ນກາງແລະສູນຕ່າງໆທີ່ຂຶ້ນກັບການຄຸ້ມຄອງຂອງຕົນໂດຍປະສານ ສົມທົບກັບກົມຈັດຕັ້ງແລະພະນັກງານ.

ອະທິການບໍດີມະຫາວິທະຍາໄລ ແຕ່ງຕັ້ງຮອງຫົວໜ້າຫ້ອງການ, ຮອງຜູ້ອຳນວຍການສູນ, ທຽບເທົ່າ ແລະ ຕຳແໜ່ງທີ່ຕ່ຳກວ່າລົງມາ.

ສ່ວນຕຳແໜ່ງບໍລິຫານການສຶກສາທີ່ສູງກວ່ານັ້ນ ແມ່ນລັດຖະມົນຕີວ່າການກະຊວງສຶກສາທິການເປັນຜູ້ແຕ່ງຕັ້ງ.

ມາດຕາ 8: ຜູ້ທີ່ໄດ້ດຳລົງຕຳແໜ່ງບໍລິຫານປະເພດຕ່າງໆຈະໄດ້ຮັບການອຸດໜູນໃນແຕ່ລະເດືອນດັ່ງນີ້:

- ຕຳແໜ່ງບໍລິຫານປະເພດ I ໄດ້ຮັບເງິນອຸດໜູນຕຳແໜ່ງ 35,000 ກີບ, ຄ່ານ້ຳມັນ 700,000 ກີບ ແລະ ຄ່າໂທລະສັບ 100,000 ກີບ;
- ຕຳແໜ່ງບໍລິຫານປະເພດ II ໄດ້ຮັບເງິນອຸດໜູນຕຳແໜ່ງ 25,000 ກີບ, ຄ່ານ້ຳມັນ 500,000 ກີບ ແລະ ຄ່າໂທລະສັບ 100,000 ກີບ;
- ຕຳແໜ່ງບໍລິຫານປະເພດ III ໄດ້ຮັບເງິນອຸດໜູນຕຳແໜ່ງ 19,000 ກີບ, ຄ່ານ້ຳມັນ 400,000 ກີບ ແລະ ຄ່າໂທລະສັບ 100,000 ກີບ;
- ຕຳແໜ່ງບໍລິຫານປະເພດ IV ໄດ້ຮັບເງິນອຸດໜູນຕຳແໜ່ງ 14,000 ກີບ, ຄ່ານ້ຳມັນ 200,000 ກີບ.
- ຕຳແໜ່ງບໍລິຫານປະເພດ V ໄດ້ຮັບເງິນອຸດໜູນຕຳແໜ່ງ 10,000 ກີບ, ຄ່ານ້ຳມັນ 150,000 ກີບ.
- ຕຳແໜ່ງບໍລິຫານປະເພດ VI ໄດ້ຮັບເງິນອຸດໜູນຕຳແໜ່ງ 8,000 ກີບ, ຄ່ານ້ຳມັນ 80,000 ກີບ.
- ຕຳແໜ່ງບໍລິຫານປະເພດ VII ໄດ້ຮັບເງິນອຸດໜູນຕຳແໜ່ງ 7,000 ກີບ, ຄ່ານ້ຳມັນ 70,000 ກີບ.
- ຕຳແໜ່ງບໍລິຫານປະເພດ VIIIໄດ້ຮັບເງິນອຸດໜູນຕຳແໜ່ງ 5,000 ກີບ, ຄ່ານ້ຳມັນ 60,000 ກີບ.

ມາດຕາ 9: ສຳລັບລັດຖະກອນທົ່ວໄປທີ່ບໍ່ໄດ້ດຳລົງຕຳແໜ່ງບໍລິຫານປະເພດໃດໜຶ່ງໃຫ້ອຸດໜູນຄ່ານ້ຳມັນເດືອນລະ 50,000 ກີບ.

ມາດຕາ 10: ລັດຖະກອນທຸກຄົນທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງບໍລິຫານໃດໜຶ່ງລວມທັງແຕ່ງຕັ້ງໃຫ້ຮັກສາການແທນຕຳແໜ່ງບໍລິຫານປະເພດໃດໜຶ່ງແຕ່ 06 ເດືອນຂຶ້ນໄປຈະໄດ້ຮັບເງິນອຸດໜູນຕຳແໜ່ງຕາມລະບຽບການ ນັບແຕ່ຂໍ້ຕົກລົງແຕ່ງຕັ້ງມີຜົນສັກສິດເປັນຕົ້ນໄປ.

ມາດຕາ 11: ຜູ້ທີ່ດຳລົງຕຳແໜ່ງບໍລິຫານປະເພດໃດໜຶ່ງຈະສິ້ນສຸດການຮັບເງິນອຸດໜູນຕຳແໜ່ງຕາມກໍລະນີດັ່ງນີ້:

1. ຜູ້ທີ່ພົ້ນຈາກຕຳແໜ່ງບໍລິຫານປະເພດໃດໜຶ່ງຢ່າງເປັນທາງການແລ້ວ ຈະບໍ່ໄດ້ຮັບເງິນອຸດໜູນ ຕຳແໜ່ງອີກຕໍ່ໄປ, ນັບແຕ່ວັນຂໍ້ຕົກລົງໃຫ້ພົ້ນຈາກຕຳແໜ່ງມີຜົນສັກສິດເປັນຕົ້ນໄປ;
2. ຜູ້ທີ່ໄດ້ໄປສຶກສາຮ່ຳຮຽນ, ບຳລຸງຍົກລະດັບຢູ່ບ່ອນອື່ນຢ່າງເປັນປະຈຳ ນັບແຕ່ 06 ເດືອນຂຶ້ນໄປ ຫຼື ຜູ້ທີ່ບໍ່ສາມາດປະຕິບັດໜ້າຕຳແໜ່ງທີ່ພວມດຳລົງຢູ່ນັ້ນ ຍ້ອນບັນຫາທາງດ້ານສຸຂະພາບ ຫຼື ຍ້ອນສະພາບແວດລ້ອມອື່ນໆ ແຕ່ 03 ເດືອນຂຶ້ນໄປ;
3. ຜູ້ທີ່ຖືກແຕ່ງຕັ້ງຢ່າງເປັນທາງການໄປປະຈຳການຊົ່ວຄາວຢູ່ລັດວິສາຫະກິດ ຫຼື ອົງການຈັດຕັ້ງສາກົນ ຫຼື ໂຄງການຊ່ວຍເຫຼືອຂອງສາກົນ;
4. ຜູ້ທີ່ໄດ້ຢຸດເຊົາຮັກສາການແທນຕຳແໜ່ງບໍລິຫານ
5. ຜູ້ທີ່ໄດ້ປະລະໜ້າທີ່ຕຳແໜ່ງເປັນເວລາ 30 ວັນຕິດຕໍ່ກັນຂຶ້ນໄປ ໂດຍບໍ່ມີເຫດຜົນ.

ມາດຕາ 12: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນຂໍ້ຕົກລົງ, ຂໍ້ກຳນົດ, ຄຳສັ່ງ ແລະ ລະບຽບການ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ເປັນໂມຄະ.

ລັດຖະມົນຕີວ່າການກະຊວງສຶກສາທິການ

ສຈ.ດຣ ສົມກົດ ມັງໜໍ່ເມກ